University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**The need for vocational training in the Laotian industry**
ຫົວຂໍ້: ຄວາມຕ້ອງການດ້ານການຝຶກອົບຮົມວິຊາຊີບໃນອຸດສາຫະກຳລາວ

**ອະທິບາຍໂດຍຫຍໍ້**
ອ່ານວິທີທີ່ Christine Bigler ແລະ Bounseng Khammounty
ປຶກສາຫາລືກ່ຽວກັບຜົນໄດ້ຮັບທຳອິດຂອງໂຄງການຄົ້ນຄວ້າ "ທັກສະສຳລັບອຸດສາຫະກຳ".

**ເນື້ອໃນ:**

ການເຕີບໂຕຂອງການຄ້າເສລີໄດ້ຊຸກຍູ້ສົ່ງເສີມກະແສໂລກາພິວັດຂອງບັນດາອຸດສາຫະກຳທີ່ເນັ້ນການສົ່ງອອກ ແລະ ໃຊ້ແຮງງານ ໜັກ (True 2012). ແມ່ຍິງມີບົດບາດສຳຄັນຫຼັກໃນເສດຖະກິດຂອງໂລກ. ແທ້ຈິງແລ້ວ, ເສດຖະກິດຂອງໂລກຈະບໍ່ສາມາດກ້າວເດີນໄປໄດ້ໂດຍປາສະຈາກວຽກງານທີ່ມີຄ່າຈ້າງ ແລະ ບໍ່ມີຄ່າຈ້າງຂອງແມ່ຍິງ. ແຮງງານແມ່ຍິງນັ້ນເປັນຄືໝາກຫົວໃຈໃນກະແສໂລກາພິວັດ (Barton and Nazombei 2000). ແມ່ຍິງສ່ວນໃຫຍ່ເປັນຄົນງານຢູ່ໃນຂະແໜງອຸດສາຫະກຳສົ່ງອອກ ເຊັ່ນ ແຜ່ນແພ ແລະ ອາຫານ. ອຸດສາຫະກຳແຜ່ນແພເປັນໂລກາພິວັດໂດຍສະເພາະດ້ວຍຈຳນວນຄົນງານນັບລ້ານຄົນໃນທົ່ວໂລກ, ມີສັກກະຍະພາບທີ່ຈະສົ່ງເສີມການພັດທະນາທາງດ້ານສັງຄົມ ແລະ ເສດຖະກິດ. ແຮງງານສ່ວນໃຫຍ່ໃນອຸດສາຫະກຳແຜ່ນແພ ແມ່ນແມ່ຍິງທີ່ມີການສຶກສາຕ່ຳ. ຫຼາຍຄັ້ງທີ່ແມ່ຍິງເຮັດວຽກພາຍໃຕ້ສະພາບທີ່ມີຄວາມສ່ຽງ ໂດຍໄດ້ຮັບການຄຸ້ມຄອງທາງສັງຄົມ ແລະ ແຮງງານພຽງເລັກນ້ອຍເທົ່ານັ້ນ (True 2012; International Labour Organization and BetterWork 2016).

ກ່ອນການລະບາດຂອງພະຍາດໂຄວິດ 19, ປະເທດລາວໄດ້ປະສົບກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກຢ່າງໜ້າປະທັບໃຈ. ຈາກປີ 2018 ຫາ 2019, ການເຕີບໂຕທາງດ້ານເສດຖະກິດມີຄ່າສະເລ່ຍ ແມ່ນ 7.2 %. ການມີສ່ວນຮ່ວມຂອງແມ່ຍິງໃນຕະຫຼາດແຮງງານໄດ້ເພີ່ມຂຶ້ນໃນຊ່ວງໄລຍະທົດສະວັດທີ່ຜ່ານມາ. ໃນປັດຈຸບັນ, ແຮງງານນອກລະບົບສ່ວນໃຫຍ່ແມ່ນແມ່ຍິງ, ແຕ່ຊ່ອງຫວ່າງດ້ານຄ່າແຮງລະຫວ່າງເພດຍິງ-ຊາຍນັ້ນຍັງຄົງຢູ່. ການຂາດແຄນໂອກາດທາງດ້ານການສຶກສາ ແລະ ເສດຖະກິດນັ້ນຜັກດັນໃຫ້ແມ່ຍິງເຂົ້າສູ່ຂະແໜງນອກລະບົບ ແລະ ວຽກເຮັດງານທຳໂດຍປາສະຈາກເງື່ອນໄຂຂອງສະພາບການເຮັດວຽກທີ່ເໝາະສົມ. ການຝຶກອົບຮົມທັກສະວິຊາຊີບເປັນເຄື່ອງມືອັນໜຶ່ງສຳລັບແມ່ຍິງ ແລະ ກຸ່ມຄົນຜູ້ດ້ອຍໂອກາດ ຫຼື ມີຄວາມສ່ຽງ ໃຫ້ສາມາດເຂົ້າເຖິງວຽກງານທີ່ດີກວ່າ. ໂຄງການຄົ້ນຄວ້າ "ທັກສະສຳລັບອຸດສາຫະກຳ"

ສຸມໃສ່ຄວາມສໍາພັນລະຫວ່າງການຝຶກອົບຮົມດ້ານທັກສະ ແລະ ການພັດທະນາດ້ານອຸດສາຫະກໍາໃນລາວ. ໃດອີກດ້ານໜຶ່ງ, ການຄົ້ນຄວ້າໄດ້ພົບວ່າບັນດາບໍລິສັດໃນລາວ ລວມເຖິງບໍລິສັດທີ່ຢູ່ໃນຂະແໜງການແຜ່ນແພ ມັກຈະບໍ່ໄດ້ມີການກະກຽມຄວາມພ້ອມທາງດ້ານຄວາມຮູ້ກ່ຽວກັບວຸດທິການສຶກສາ ແລະ ສີມືຂອງແຮງງານ ແລະ ບໍ່ໄດ້ຍຶດຖືເອົາການຜ່ານຫຼັກສູດສີມືແຮງງານ ກ່ອນ ຫຼື ໃນລະຫວ່າງການຈ້າງງານ. ແຮງງານພຽງແຕ່ໄດ້ຮັບການຝຶກອົບຮົມໃນໜ້າວຽກໃນໄລຍະທໍາອິດຂອງການຈ້າງງານເທົ່ານັ້ນ (Maurer and Teutoburg-Weiss 2020). ຄຽງຄູ່ກັນນັ້ນ, ຂໍ້ມູນທີ່ເກັບກໍາໄດ້ຊີ້ແຈງໃຫ້ເຫັນວ່າ, ໃນບາງບໍລິສັດໄດ້ມີການຝຶກອົບຮົມໃຫ້ໃນເບື້ອງຕົ້ນ ໂດຍສະເພາະແມ່ນໃນດ້ານຄວາມປອດໄພ ແລະ ລະບຽບການຕ່າງໆ. ບັນດານາຍຈ້າງຖືວ່າການຝຶກອົບຮົມທັກສະໃນລະຫວ່າງການຈ້າງງານນັ້ນ ມີຄວາມສໍາຄັນກວ່າຫຼັກສູດສີມືແຮງງານກ່ອນການຈ້າງງານ. ນອກຈາກນີ້, 61% ຂອງບັນດາບໍລິສັດໃນອຸດສາຫະກໍາທີ່ໄດ້ສໍາຫຼວດ ລະບຸວ່າເຂົາເຈົ້າຍັງຂາດແຄນແຮງງານທີ່ມີສີມື. ໂດຍສະເພາະບໍລິສັດທີ່ມີການຂະຫຍາຍຕົວສູງ ລາຍງານໃຫ້ເຫັນຄວາມຫຍຸ້ງຍາກໃນການສັນຫາແຮງງານທີ່ມີສີມື, ເຫັນໄດ້ຈະແຈ້ງວ່າແຮງງານທີ່ມີສີມືນັ້ນເປັນສິ່ງທີ່ຕ້ອງການ. ເພື່ອໃຫ້ການຝຶກອົບຮົມວິຊາຊີບສາມາດປະສົບຜົນສໍາເລັດ ແລະ ເພື່ອໃຫ້ແມ່ຍິງໄດ້ເຂົ້າເຖິງວຽກງານທີ່ເໝາະສົມຫຼາຍຂຶ້ນ, ສິ່ງທີ່ສໍາຄັນກໍຄືການເຊື່ອມໂຍງຄວາມຄິດລິເລີ່ມການຝຶກອົບຮົມທັກສະວິຊາຊີບເຂົ້າກັບອຸດສາຫະກໍາສະເພາະ ແລະ ຄວາມຕ້ອງການຂອງເຂົາເຈົ້າ. ທາງເບື້ອງນາຍຈ້າງເອງກໍຕ້ອງມີສ່ວນຮ່ວມໃນການພັດທະນາຂໍ້ລິເລີ່ມດ້ານການຝຶກອົບຮົມທັກສະວິຊາຊີບເຊັ່ນກັນ (Maurer and Teutoburg-Weiss 2020).

ການຂະຫຍາຍຕົວທາງດ້ານເສດຖະກິດບໍ່ໄດ້ນໍາໄປສູ່ວຽກງານທີ່ເໝາະສົມ ແລະ ການຈ້າງງານຢ່າງເປັນທາງການໂດຍອັດຕະໂນມັດ. ເຖິງແນວໃດກໍຕາມ, ຖ້າການຫັນປ່ຽນທາງດ້ານເສດຖະກິດນີ້ ຄວບຄູ່ໄປກັບນະໂຍບາຍທີ່ຕອບສະໜອງບົດບາດຍິງ-ຊາຍແລ້ວ, ການເຮັດວຽກງານທໍາທີ່ບໍ່ເປັນລະບົບ ກໍສາມາດຫັນປ່ຽນເປັນວຽກງານທີ່ເປັນລະບົບໄດ້. ດ້ວຍວິທີນີ້ ແມ່ຍິງ ແລະ ຜູ້ຊາຍຈະສາມາດມີໂອກາດໃນການເຂົ້າເຖິງວຽກງານທີ່ເໝາະສົມ ທີ່ເທົ່າທຽມກັນ (Espino and de los Santos Daniela 2021).

## ເນື້ອຫາເພີ່ມເຕີມ:

Better Work (2021). https://betterwork.org/

International Labour Organization (2020): Gendered impacts of COVID-19 on the garment sector. ILO brief.International Labour Organization, Geneva.

## ເອກະສານອ້າງອີງ

Barton, Carol; Nazombei, Elvira (2000): Women's labour and economic globalisation: a participatory workshop created by Alternative Women in Development (Alt-WID). In *Gender and development* 8 (1), pp. 35–44. DOI: 10.1080/741923416.

University of Basel


Espino, Alma; de los Santos Daniela (2021): Labour Markets and Inforaml Worker in the South. In Günseli Berik, Ebru Kongar (Eds.): The Routledge Handbook of Feminist Economies. London: Routledge, pp. 198–206.

International Labour Organization; BetterWork (2016): Progress and Potential. How Better Work is improving garment workers' lives and boosting factory competitiveness. A summary of an independent assessment. International Labour Organization. Geneva, checked on 5/28/2021.

Maurer, Markus; Teutoburg-Weiss, Hannes (2020): Erste Ergebnisse aus dem Projekt «Skills-for-Industry». In *Transfer, Berufsbildung in Forschung und Praxis*.

True, Jacqui (2012): The Political Economy of Violence against Women: Oxford University Press, checked on 5/28/2021.